**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

2907

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ............../ກຊສ

ນະຄອນຫຼວງວຽງຈັນ, ວັນທີ 24 ຕຸລາ 2024

# ຂໍ້ຕົກລົງ
# ວ່າດ້ວຍເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

- ອີງຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມໜັງສືສະເໜີຂອງກົມຊັບພະຍາກອນນ້ຳ ສະບັບເລກທີ 0610/ກຊສ.ກຊນ, ລົງວັນທີ 7 ມິຖຸນາ 2024.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ, ຂັ້ນຕອນ ແລະ ມາດຕະການ ກ່ຽວກັບການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານດັ່ງກ່າວ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ເພື່ອປົກປັກຮັກສາຄຸນນະພາບ ແລະ ປະລິມານຂອງນ້ຳ ສຳລັບບໍລິໂພກ ແລະ ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ອະນຸລັກພັນພືດ ແລະ ສັດນ້ຳ, ລະບົບນິເວດ, ຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນາທຳ, ການທ່ອງທ່ຽວ, ການສຶກສາ ແລະ ການຄົ້ນຄວ້າທົດລອງທາງວິທະຍາສາດ ແນໃສ່ປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ລະບົບນິເວດ ໃຫ້ມີຄວາມອຸດົມສົມບູນ ຕອບສະໜອງຄວາມຕ້ອງການໃນການດຳລົງຊີວິດຂອງປະຊາຊົນ, ການຜະລິດກະສິກຳ, ອຸດສາຫະກຳ ແລະ ການບໍລິການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໄປຕາມທິດຍືນຍົງ ແລະ ສີຂຽວ.

**ມາດຕາ 2 ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ພື້ນທີ່ສະຫງວນໄວ້ ເພື່ອປົກປັກຮັກສາຄຸນນະພາບ ແລະ ປະລິມານຂອງນ້ຳ ເພື່ອບໍລິໂພກ ແລະ ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ອະນຸລັກພັນພືດ ແລະ ສັດນ້ຳ, ລະບົບນິເວດ, ຄຸນຄ່າມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ການສຶກສາ, ການຄົ້ນຄວ້າ ແລະ ການທົດລອງວິທະຍາສາດ ຊຶ່ງເຂດສະຫງວນດັ່ງກ່າວ ໄດ້ກຳນົດເຂົ້າໃນແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານ.

**ມາດຕາ 3 ອະທິບາຍຄຳສັບ**

1. **ເຂດສະຫງວນ** ໝາຍເຖິງ ພື້ນທີ່ສະຫງວນໄວ້ ໃນການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ, ອະນຸລັກ

ທຳມະຊາດ, ປົກປັກຮັກສາພັນພືດ, ພັນສັດ, ລະບົບນິເວດ ແລະ ສິ່ງມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການທົດລອງທາງວິທະຍາສາດ;

2. **ລະບົບນິເວດ** ໝາຍເຖິງ ສາຍພົວພັນລະຫວ່າງ ສິ່ງມີຊີວິດ ແລະ ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;

3. **ຊີວະນາໆພັນ** ໝາຍເຖິງ ຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;

4. **ຫຼັກໝາຍ** ໝາຍເຖິງ ຫຼັກເຂດທີ່ຝັງໃສ່ຈຸດແຈເຂດແດນຕອນດິນຂອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອເປັນຫຼັກຖານຈຸດອ້າງອີງໃຫ້ແກ່ການສຳຫຼວດ ວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;

5. **ມາດຕາສ່ວນແຜນທີ່** ໝາຍເຖິງ ອັດຕາສ່ວນພົວພັນລະຫວ່າງ ໄລຍະຢູ່ເທິງແຜນທີ່ເຈັ້ຍ ຕໍ່ກັບໄລຍະຕົວຈິງຢູ່ເທິງໜ້າໂລກ ແລະ ວັດຖຸສິ່ງຂອງ ອີງໃສ່ໜ້າວຽກທີ່ຈະເອົາໄປນຳໃຊ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

## ໝວດທີ 2
## ການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ

**ມາດຕາ 5 ການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ**

ການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າລະດັບຊາດ ເພື່ອສະເໜີລັດຖະບານພິຈາລະນາຮັບຮອງ ບົນພື້ນຖານການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບພະແນກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ລະດັບແຂວງ ເພື່ອສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ ບົນພື້ນຖານການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ໃນການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ລະດັບເມືອງ ເພື່ອສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງ ບົນພື້ນຖານການເຫັນດີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ພື້ນທີ່ສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ແມ່ນ ໃຫ້ກຳນົດເປັນເຂດ ດັ່ງນີ້:

1. ເຂດສະຫງວນເພື່ອບໍລິໂພກ ແລະ ອຸປະໂພກ;
2. ເຂດບໍລິເວນຍອດນໍ້າ;
3. ເຂດທີ່ມີຄວາມສ່ຽງຕໍ່ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ;
4. ເຂດທີ່ດິນບໍລິເວນນໍ້າ;
5. ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນໍ້າໃຕ້ດິນ;
6. ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ;
7. ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນໍ້າ ແລະ ເຂດບໍລິເວນແຄມນໍ້າ;
8. ເຂດພື້ນທີ່ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ.

ໃນກໍລະນີເຂດສະຫງວນໃດ ຫາກຂະແໜງການທີ່ກ່ຽວຂ້ອງກຳນົດແລ້ວ ກໍໃຫ້ປະສານສົມທົບເອົາຈຸດພິກັດແຜນທີ່ ຫຼື ກວດກາ ເຂດແດນຄືນໃໝ່ ເພື່ອໃຫ້ສາມາດກຳນົດເຂົ້າໃນແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານ.

ສຳລັບການກຳນົດຂອບເຂດວັງສະຫງວນລະດັບບ້ານ ມອບໃຫ້ອົງການປົກຄອງບ້ານ ເປັນຜູ້ກຳນົດໃຫ້ສອດຄ່ອງກັບຈຸດພິເສດ ແລະ ທີ່ຕັ້ງຂອງບ້ານ ຕາມມະຕິກອງປະຊຸມຂອງປະຊາຊົນພາຍໃນບ້ານ ບົນພື້ນຖານການເຫັນດີຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

## ມາດຕາ 6 ເຂດສະຫງວນເພື່ອບໍລິໂພກ ແລະ ອຸປະໂພກ

ເຂດສະຫງວນເພື່ອບໍລິໂພກ ແມ່ນ ເຂດທີ່ໄດ້ກຳນົດໃຊ້ສະເພາະການບໍລິໂພກ ຂອງພົນລະເມືອງເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ເຂົ້າໃນເປົ້າໝາຍອື່ນຢ່າງເດັດຂາດ. ສ່ວນການນຳໃຊ້ນ້ຳເພື່ອອຸປະໂພກນັ້ນ ແມ່ນການນຳໃຊ້ນ້ຳ ໃຫ້ເກີດຜົນປະໂຫຍດຕໍ່ການດຳລົງຊີວິດ, ການກະສິກຳ, ການຄ້າ ແລະ ການບໍລິການ ໄປຄຽງຄູ່ກັບການບໍລິໂພກ ໂດຍມີການກຳນົດຂອບເຂດສະຫງວນຢ່າງຈະແຈ້ງ.

## ມາດຕາ 7 ເຂດບໍລິເວນຍອດນ້ຳ

ເຂດບໍລິເວນຍອດນ້ຳ ແມ່ນ ແຫຼ່ງໃຫ້ກຳເນີດນ້ຳ ທີ່ໄດ້ໄຫຼລົງສູ່ ສາຍນ້ຳ, ຫ້ວຍ, ບຶງ, ລຳເຊ ຫຼື ແຫຼ່ງນ້ຳໃດໜຶ່ງ ແລະ ຖືກປົກຄຸມດ້ວຍສະພາບປ່າໄມ້ຕາມທຳມະຊາດ ທີ່ມີຄວາມອຸດົມສົມບູນ ຊຶ່ງສ່ວນຫຼາຍ ຢູ່ພູ ຫຼື ພື້ນທີ່ສູງ ທີ່ມີຄວາມຄ້ອຍຊັນ.

## ມາດຕາ 8 ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ

ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແມ່ນ ເຂດພື້ນທີ່ທີ່ມີໂອກາດເກີດໄພນ້ຳຖ້ວມ ຊຶ່ງມີຄວາມເປັນໄປໄດ້ທີ່ຈະກໍ່ໃຫ້ເກີດຄວາມສູນເສຍ ແລະ ເສຍຫາຍຕໍ່ຊີວິດ, ຊັບສິນ ຊຶ່ງຫ້າມປະຊາຊົນ, ບຸກຄົນ ຫຼື ນິຕິບຸກຄົນ ປຸກສ້າງທີ່ຢູ່ອາໄສ ແລະ ທຳການຜະລິດກະສິກຳ ຫຼື ກິດຈະກຳອື່ນ ທີ່ມີລັກສະນະຖາວອນ ເພື່ອຫຼຸດຜ່ອນຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ.

ເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ ແມ່ນ ສະພາບພື້ນທີ່ທີ່ຂາດແຄນນ້ຳຈາກສາເຫດທີ່ຝົນບໍ່ຕົກເປັນເວລາດົນ ຫຼື ຝົນບໍ່ຕົກຕາມລະດູການ ເປັນພື້ນທີ່ທີ່ຢູ່ຫ່າງໄກຈາກແຫຼ່ງນ້ຳ, ບໍ່ມີແຫຼ່ງນ້ຳໃຊ້ພຽງພໍກັບຄວາມຕ້ອງການ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການຄົ້ນຄວ້າ ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ, ເຝົ້າລະວັງ, ກຽມພ້ອມຮັບມືສະພາບບັນຫາໄພແຫ້ງແລ້ງ ແລະ ໃຫ້ຂໍ້ມູນແກ່ສັງຄົມ ພ້ອມທັງກຳນົດເຂດທີ່ມີຄວາມສ່ຽງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ.

## ມາດຕາ 9 ເຂດທີ່ດິນບໍລິເວນນ້ຳ

ເຂດທີ່ດິນບໍລິເວນນ້ຳ ແມ່ນ ທີ່ດິນທີ່ຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ຊຶ່ງນອນຢູ່ໃນພື້ນທີ່ທີ່ດິນປະເພດອື່ນ ເປັນຕົ້ນ ເຂດພື້ນທີ່ດິນທາມ, ໜອງ, ບຶງ, ທົ່ງຫຍ້ານ້ຳຖ້ວມ, ທີ່ດິນນ້ຳອອກບໍ່, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ກຸດ, ທີ່ດິນທີ່ເກີດຈາກການດັດແປງ ຫຼື ອອຍແລວນ້ຳ, ນ້ຳຂັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ.

## ມາດຕາ 10 ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ

ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ ແມ່ນ ເຂດນ້ຳໃຕ້ດິນທີ່ມີຊັ້ນນ້ຳເຄັມ ແລະ ເຂດທີ່ມີສານເຄມີອັນຕະລາຍເຈືອປົນ ຊຶ່ງເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ລວມທັງເຂດທີ່ມີການນຳໃຊ້ນ້ຳໃຕ້ດິນໃນປະລິມານຫຼາຍ ອາດຈະເຮັດໃຫ້ເກີດການຍຸບຕົວຂອງຊັ້ນດິນ ໃນເຂດດັ່ງກ່າວ ຕ້ອງມີມາດຕະການຈຳກັດການນຳໃຊ້ນ້ຳໃຕ້ດິນ ຢ່າງມີປະສິດທິພາບ.

**ມາດຕາ 11 ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ**

ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ ແມ່ນ ເຂດທີ່ມີທິວທັດທາງທຳມະຊາດ ຊຶ່ງມີຄຸນຄ່າທາງດ້ານທັດສະນີຍະພາບອັນສວຍສົດງົດງາມ ແລະ ໂດດເດັ່ນທີ່ມີ ພູ, ຜາ, ປ່າໄມ້, ແມ່ນ້ຳ, ລຳເຊ, ນ້ຳຕົກຕາດ ແລະ ອື່ນໆ.

ເຂດທີ່ມີຄຸນຄ່າທາງດ້ານປະຫວັດສາດ ແມ່ນ ເຂດທີ່ມີຄຸນຄ່າທາງດ້ານວັດຖຸ ຊຶ່ງເປັນມໍຣະດົກ ທີ່ມີຕົວຕົນ ເປັນຊັບສົມບັດອັນລ້ຳຄ່າທາງດ້ານປະຫວັດສາດ, ສະຖານທີ່ປະຫວັດສາດ ຊຶ່ງເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ເປັນຕົ້ນ ອາວຸດຍຸດໂທປະກອນ, ສະໜໍລະພູມ, ອະນຸສອນສະຖານ, ຖານທີ່ໝັ້ນຂອງຂະບວນການຕໍ່ສູ້ຂອງປະຊາຊົນ, ຜູ້ນຳການປະຕິວັດ. ນອກຈາກນັ້ນ, ຍັງມີເຂດທີ່ມີຄຸນຄ່າທາງດ້ານຈິດໃຈທີ່ບໍ່ເປັນວັດຖຸ ທີ່ຕິດພັນກັບປະຫວັດສາດມາແຕ່ລະຍຸກແຕ່ລະສະໄໝ ເປັນຕົ້ນ ແນວຄິດ, ທິດສະດີ, ອຸດົມການ ຊຶ່ງສະແດງເຖິງມູນເຊື້ອຮັກຊາດ, ພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ, ບົດຮຽນໃນການຕໍ່ສູ້, ການນຳພາ, ການປົກຄອງ, ການສ້າງສາພັດທະນາປະເທດຊາດ.

ເຂດທີ່ມີຄຸນຄ່າທາງດ້ານວັດທະນະທຳ ແມ່ນ ເຂດທີ່ມີຄຸນຄ່າທາງດ້ານວັດຖຸ ຊຶ່ງເປັນມໍຣະດົກທີ່ມີຕົວຕົນ ເປັນຊັບສົມບັດອັນລ້ຳຄ່າທາງດ້ານວັດທະນະທຳທີ່ເປັນເອກະລັກ ຊຶ່ງເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ເປັນຕົ້ນ ສິ່ງຈາລຶກບູຮານ, ວັດຖຸບູຮານ, ບູຮານສະຖານ, ປູຊະນີຍະສະຖານ. ນອກຈາກນັ້ນ, ຍັງມີເຂດທີ່ມີຄຸນຄ່າທາງດ້ານຈິດໃຈທີ່ບໍ່ເປັນວັດຖຸ ຊຶ່ງເປັນຊັບສົມບັດອັນລ້ຳຄ່າທາງດ້ານວັດທະນະທຳ ເປັນຕົ້ນ ພູມປັນຍາ, ຄວາມເຊື່ອຖື, ຮີດຄອງປະເພນີອັນດີງາມ ຊຶ່ງສະແດງອອກໃນວິຖີຊີວິດ.

**ມາດຕາ 12 ເຂດພື້ນທີ່ອະນຸລັກຊີວະນານາພັນທາງນ້ຳ ແລະ ເຂດບໍລິເວນແຄມນ້ຳ**

ເຂດພື້ນທີ່ອະນຸລັກຊີວະນານາພັນທາງນ້ຳ ແມ່ນ ເຂດທີ່ເປັນບ່ອນຢູ່ອາໄສຂອງສັດ ແລະ ພືດພັນຈຳນວນຫຼາຍຊະນິດພັນ ເປັນຕົ້ນ ແມ່ນ້ຳ, ລຳເຊ, ບຶງ, ໜອງ, ກຸດ, ອ່າງເກັບນ້ຳ ຊຶ່ງເຂດດັ່ງກ່າວ ເປັນເຂດສະຫງວນໄວ້ເພື່ອອະນຸລັກຊີວະນານາພັນທາງນ້ຳ.

ເຂດບໍລິເວນແຄມນ້ຳ ແມ່ນ ສ່ວນໜຶ່ງຂອງທີ່ດິນບໍລິເວນນ້ຳ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ**

ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ ແມ່ນ ພື້ນທີ່ເຂດເທດສະບານ, ຊຸມຊົນ ທີ່ກຳນົດເປັນເຂດທີ່ອະນຸລັກໄວ້ ເພື່ອຮັກສາລະບົບນິເວດ ແລະ ຊີວະນານາພັນ ເປັນຕົ້ນ ທິວທັດທຳມະຊາດ, ສວນສາທາລະນະ, ປ່າໄມ້ທີ່ຍັງຫຼົງເຫຼືອຢູ່ ແລະ ພື້ນທີ່ຕົ້ນໄມ້, ແມ່ນ້ຳ, ຮ່ອງນ້ຳ, ໜອງ, ບຶງ, ພື້ນທີ່ກະສິກຳ, ຊານເມືອງ, ພື້ນທີ່ນິເວດວິທະຍາທີ່ມີຫຼາຍຂະໜາດແຕກຕ່າງກັນ.

**ມາດຕາ 14 ວັງສະຫງວນ**

ວັງສະຫງວນ ແມ່ນ ເຂດນ້ຳ ເປັນຕົ້ນ ບ່ອນນ້ຳເລິກພື້ນທີ່ແຫຼ່ງນ້ຳ ຫຼື ຕາມລຳແມ່ນ້ຳໃດໜຶ່ງ ທີ່ໄດ້ກຳນົດໃຫ້ເປັນເຂດຫວງຫ້າມຕະຫຼອດລະດູການ ເພື່ອເປັນບ່ອນຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງຊັບພະຍາກອນສັດນ້ຳ.

## ໝວດທີ 3
## ຂັ້ນຕອນການກຳນົດ
## ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 15 ຂັ້ນຕອນການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ, ເກັບກຳຂໍ້ມູນສະພາບພື້ນທີ່;

2. ປັກຫຼັກໝາຍ ແລະ ການສຳຫຼວດວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

3. ການພິຈາລະນາຮັບຮອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

4. ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

ມອບໃຫ້ກົມຊັບພະຍາກອນນ້ຳ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ້າງຄູ່ມືແນະນຳ ກ່ຽວກັບການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

### ມາດຕາ 16 ການສຳຫຼວດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ການສຳຫຼວດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການລົງພື້ນທີ່ພາກສະໜາມ, ການເກັບກຳຂໍ້ມູນ ແລະ ການປະເມີນ ເຂດພື້ນທີ່ທີ່ມີທ່າແຮງ ເພື່ອກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງສ້າງແຜນທີ່ສະແດງເຂດດັ່ງກ່າວ.

### ມາດຕາ 17 ການປັກຫຼັກໝາຍ ແລະ ການສຳຫຼວດວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ການປັກຫຼັກໝາຍທີ່ດິນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ເຄື່ອງໝາຍທາງການ ຊຶ່ງໃຊ້ສະເພາະເປັນເຄື່ອງໝາຍຝັງໃສ່ຈຸດແຈຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອເປັນຫຼັກຖານຈຸດອ້າງອີງໃຫ້ການສຳຫຼວດວັດແທກຕອນດິນ ພ້ອມທັງຕິດຕັ້ງປ້າຍ ແລະ ລະບຸຂໍ້ມູນສຳຄັນຕ່າງໆ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແລະ ຈຸດພິເສດສຳຄັນອື່ນໆ.

ການສຳຫຼວດວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການດຳເນີນການສຳຫຼວດ ວັດແທກສ້າງແຜນທີ່ດິນ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຊຶ່ງປະກອບມີຂໍ້ມູນຕ່າງໆ ເປັນຕົ້ນ ແຜນທີ່ຕາດິນ, ເລກທີ່ຕອນດິນ, ມາດຕາສ່ວນແຜນທີ່, ທີ່ຕັ້ງ, ໄລຍະເຂດແດນ, ລະຫັດຫຼັກເຂດ, ເລກທີຕອນດິນຂ້າງຄຽງ, ເສັ້ນທາງ, ຮ່ອງນ້ຳ, ສາຍນ້ຳ.

### ມາດຕາ 18 ການພິຈາລະນາຮັບຮອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ພາຍຫຼັງສຳເລັດ ການສຳຫຼວດ ວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ນຳສະເໜີອົງການທີ່ມີສິດພິຈາລະນາຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 19 ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການສັງລວມຈັດໝວດ ແລະ ໃສ່ລະຫັດຂໍ້ມູນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເຂົ້າໃນຖານຂໍ້ມູນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນເຄື່ອງມືໃນການຕິດຕາມ ກວດກາ, ປະເມີນສະພາບ, ວິເຄາະບັນຫາ, ສະໜັບສະໜູນ ໃຫ້ແກ່ການວາງແຜນ ແລະ ພັດທະນານ້ຳ ແລະ ຊັບພະຍາກອນນ້ຳ.

ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ກົມຊັບພະຍາກອນນ້ຳ ເປັນຜູ້ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ລັດຖະບານຮັບຮອງ ແລ້ວສົ່ງໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງລາຍງານໃຫ້ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງຂັ້ນແຂວງ ຮັບຊາບ ເປັນແຕ່ລະໄລຍະ.

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຮັບຮອງ ແລ້ວສົ່ງໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາ ເຂດສະຫງວນນ້ຳ ແລະ

ຊັບພະຍາກອນນ້ຳ ພ້ອມທັງລາຍງານໃຫ້ກົມຊັບພະຍາກອນນ້ຳ ເພື່ອສັງລວມຂຶ້ນບັນຊີລວມສູນໃນຂອບເຂດທົ່ວປະເທດ ແລະ ລາຍງານໃຫ້ອົງການປົກຄອງຂັ້ນແຂວງ ຮັບຊາບ ເປັນແຕ່ລະໄລຍະ.

3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ ຮັບຮອງ ແລ້ວສົ່ງໃຫ້ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາ ພ້ອມທັງລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມຂຶ້ນບັນຊີໃນຂອບເຂດແຂວງ, ນະຄອນຫຼວງ ແລະ ລາຍງານໃຫ້ອົງການປົກຄອງຂັ້ນເມືອງ ຮັບຊາບ ເປັນແຕ່ລະໄລຍະ.

4. ໜ່ວຍງານເສດຖະກິດ-ການເງິນບ້ານ ເປັນຜູ້ຂຶ້ນບັນຊີເຂດວັງສະຫງວນນ້ຳ ທີ່ນາຍບ້ານຮັບຮອງ ພ້ອມທັງລາຍງານໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອສັງລວມຂຶ້ນບັນຊີໃນຂອບເຂດເມືອງ, ເທດສະບານ, ນະຄອນ ແລະ ໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ລາຍງານໃຫ້ອົງການປົກຄອງຂັ້ນເມືອງ ຮັບຊາບເປັນແຕ່ລະໄລຍະ.

**ມາດຕາ 20 ການປ່ຽນແປງເຂດແດນຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ການປ່ຽນແປງເຂດແດນ, ເພີ່ມ ຫຼື ຫຼຸດເນື້ອທີ່ດິນ, ການຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍອື່ນ ເຮັດໃຫ້ມີການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕ້ອງສະເໜີຕໍ່ອົງການທີ່ຮັບຮອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອພິຈາລະນາ. ການສະເໜີດັ່ງກ່າວ ຕ້ອງສະແດງໃຫ້ເຫັນເຫດຜົນ ແລະ ຄວາມຈຳເປັນ ໃນການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍການເຫັນດີເປັນເອກະພາບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ໝວດທີ 4
## ການຄຸ້ມຄອງ, ການປົກປັກຮັກສາ, ການກວດກາ ລາດຕະເວນ, ການຟື້ນຟູ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 21 ການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດ້ວຍການກຳນົດລະບຽບການ ຫຼື ປັກຫຼັກໝາຍ.

ໃນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ບໍ່ອະນຸຍາດໃຫ້ປຸກສ້າງ, ກໍ່ສ້າງສິ່ງກີດຂວາງທີ່ປ່ຽນແປງທາງໄຫຼຂອງນ້ຳ, ຕັດຕົ້ນໄມ້ທີ່ຢູ່ໃນເຂດຕົ້ນກຳເນີດຂອງນ້ຳ ຫຼື ຢູ່ອ້ອມແຫຼ່ງນ້ຳ, ທຳການຜະລິດກະສິກຳ, ອຸດສາຫະກຳ, ລ້ຽງສັດ, ຖົມ, ດັດແປງ ຫຼື ປ່ຽນເນື້ອທີ່ດິນບໍລິເວນແມ່ນ້ຳ, ໜອງ, ບຶງ, ຫາມ, ເຈາະກົນ ຫຼື ປັບແປງໜ້າດິນ ທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ, ຂຸດຄົ້ນຫີນ, ແຮ່ທາດ, ດິນ, ຊາຍ, ຖິ້ມຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອ, ນ້ຳເປື້ອນ, ຂອງເບື່ອ, ວັດຖຸເຄມີ, ຖິ້ມລະເບີດ, ຝັງຊາກສົບ ຫຼື ຊາກສັດ ແລະ ອື່ນໆ ທີ່ກໍ່ຄວາມເສຍຫາຍຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

ສຳລັບການປູກຝັງ, ລ້ຽງສັດ ຕາມປະເພນີແບບຄອບຄົວ ເພື່ອລ້ຽງຊີບຂອງປະຊາຊົນຢູ່ເຂດສະຫງວນບໍລິເວນແຄມນ້ຳ ແມ່ນສາມາດນຳໃຊ້ໄດ້ ແຕ່ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບທາງລົບຕໍ່ຄຸນນະພາບນ້ຳ ແລະ ການເຊາະເຈື່ອນຂອງຕາຝັ່ງ.

ແຫຼ່ງນ້ຳທີ່ນອນຢູ່ໃນ ແປດ ເຂດ ທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ຄຸ້ມຄອງ ແລະ ນຳໃຊ້ ເພື່ອໃຫ້ເກີດປະໂຫຍດສູງສຸດ.

**ມາດຕາ 22 ການປົກປັກຮັກສາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີຄວາມອຸດົມສົມບູນ, ບໍ່ໃຫ້ກໍ່ຜົນເສຍຫາຍແກ່ນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງຈັດຕັ້ງປະຕິບັດຕາມແຜນຄຸ້ມຄອງອ່າງຮັບນ້ຳ.

**ມາດຕາ 23 ການກວດກາລາດຕະເວນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງຕັ້ງຈຸດກວດກາລາດຕະເວນ ຢູ່ພາຍໃນ ແລະ ອ້ອມຂ້າງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງເປັນປົກກະຕິ ຢ່າງໜ້ອຍ ສອງ ຄັ້ງຕໍ່ປີ ແລະ ແບບກະທັນຫັນໃນກໍລະນີເຫດການເກີດຂຶ້ນ ເພື່ອສະກັດກັ້ນການບຸກລຸກທຳລາຍ ຫຼື ສ້າງຜົນກະທົບອັນບໍ່ດີຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

ງົບປະມານສຳລັບການກວດກາລາດຕະເວນ ແມ່ນນຳໃຊ້ງົບປະມານຕິດຕາມ ກວດກາວິຊາການດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ.

**ມາດຕາ 24 ການຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດການຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມແຜນຄຸ້ມຄອງອ່າງຮັບນ້ຳ ໂດຍການນຳໃຊ້ມາດຕະຖານເຕັກນິກທີ່ເໝາະສົມໃນແຕ່ລະທ້ອງຖິ່ນ ເພື່ອປັບປຸງນ້ຳ ແລະ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ຊີວະນານາພັນ ໃຫ້ມີຄວາມອຸດົມສົມບູນ.

## ໝວດທີ 5
## ການມີສ່ວນຮ່ວມຂອງສັງຄົມ

**ມາດຕາ 25 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນ ຂະບວນການປຶກສາຫາລື, ການສະໜອງຂໍ້ມູນຂ່າວສານ ແລະ ການຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນໃນສັງຄົມ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເປັນແຕ່ລະໄລຍະ ເພື່ອຮັບປະກັນຄວາມຍືນຍົງຂອງລະບົບນິເວດ ໃຫ້ມີຄວາມອຸດົມສົມບູນ.

**ມາດຕາ 26 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ຄວາມໝາຍ ແລະ ຄວາມສຳຄັນຂອງວຽກງານການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດ ການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີຄວາມຍືນຍົງ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງການໂຄສະນາເຜີຍແຜ່ ດ້ວຍຮູບການຕ່າງໆ ເພື່ອປູກຈິດສຳນຶກ ກ່ຽວກັບວຽກງານການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ແກ່ປະຊາຊົນ, ກຸ່ມຄົນ ແລະ ການຈັດຕັ້ງ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

## ໝວດທີ 6
## ການນຳໃຊ້ນ້ຳໃນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 27 ການນຳໃຊ້ນ້ຳໃນເຂດສະຫງວນເພື່ອບໍລິໂພກ ແລະ ອຸປະໂພກ**

ການນຳໃຊ້ນ້ຳໃນເຂດສະຫງວນເພື່ອບໍລິໂພກ ແມ່ນ ການນຳໃຊ້ນ້ຳຈາກແຫຼ່ງນ້ຳທີ່ຖືກຈັດສັນໄວ້ ເພື່ອຕອບສະໜອງນ້ຳເຂົ້າໃນການບໍລິໂພກ ໂດຍບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າໃນເປົ້າໝາຍອື່ນຢ່າງເດັດຂາດ ແລະ ບໍ່ໃຫ້ມີການປຸກສ້າງໂຮງໝໍ, ຕະຫຼາດ, ໂຮງງານ, ຮ້ານອາຫານ, ຟາມລ້ຽງສັດ, ໂຮງແຮມ ຫຼື ກິດຈະການອື່ນ ທີ່ຈະສົ່ງຜົນກະທົບອັນບໍ່ດີຕໍ່ຄຸນນະພາບນ້ຳ. ສຳລັບການນຳໃຊ້ແຫຼ່ງນ້ຳເພື່ອອຸປະໂພກ ເຂົ້າໃນເປົ້າໝາຍການຜະລິດ, ການຄ້າ ແລະ ການບໍລິການ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 28 ການນຳໃຊ້ນ້ຳໃນເຂດບໍລິເວນຍອດນ້ຳ**

ເຂດບໍລິເວນຍອດນ້ຳ ບໍ່ອະນຸຍາດໃຫ້ນຳໃຊ້ນ້ຳ ແລະ ດຳເນີນກິດຈະການ ທີ່ເປັນການເຊົ່າ, ສຳປະທານ ຫຼື ໃຊ້ສຳລັບການບໍລິການ ເພື່ອປ້ອງກັນບໍ່ໃຫ້ເກີດຜົນກະທົບອັນບໍ່ດີຕໍ່ລະບົບນິເວດຢູ່ເຂດຍອດນ້ຳ ແລະ ເຮັດໃຫ້ເຂດບໍລິເວນຍອດນ້ຳມີຄວາມອຸດົມສົມບູນ.

**ມາດຕາ 29 ການນຳໃຊ້ນ້ຳໃນເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ**

ການນຳໃຊ້ນ້ຳໃນເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແມ່ນ ການນຳໃຊ້ນ້ຳໜ້າດິນ ຫຼື ແຫຼ່ງນ້ຳໃຕ້ດິນ ທີ່ຢູ່ໃນເຂດດັ່ງກ່າວເຂົ້າໃນກິດຈະກຳໃດໜຶ່ງ ເພື່ອສາທາລະນະປະໂຫຍດ ແລະ ລ້ຽງຊີບ ຫຼື ນຳໃຊ້ເຂົ້າໃນປະເພນີ ເປັນຕົ້ນ ນຳໃຊ້ເຂົ້າໃນການບໍລິໂພກ, ຊົນລະປະທານ, ປູກຝັງ, ລ້ຽງສັດ ຊຶ່ງຫຼີກເວັ້ນເຮັດການຜະລິດກະສິກຳ ຫຼື ກິດຈະກຳອື່ນ ທີ່ມີລັກສະນະຖາວອນ ເພື່ອຫຼຸດຜ່ອນຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ.

ການນຳໃຊ້ນ້ຳໃນເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ ແມ່ນ ບໍ່ອະນຸຍາດໃຫ້ມີການນຳໃຊ້ນ້ຳເຂົ້າໃນການຜະລິດອຸດສາຫະກຳ, ໂຄງການ ຫຼື ກິດຈະການບໍລິການ ເພື່ອສາມາດສະໜອງນ້ຳເຂົ້າໃນການດຳລົງຊີວິດ ຢ່າງພຽງພໍ ເປັນຕົ້ນ ການບໍລິໂພກ, ການປູກຝັງ, ການນຳໃຊ້ນ້ຳເຂົ້າໃນລະບົບແຈກຢາຍຂອງຊຸມຊົນ.

ການນຳໃຊ້ນ້ຳ ຢູ່ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ເພື່ອເປົ້າໝາຍການບໍລິການ ຫຼື ການນຳໃຊ້ເຂົ້າໃນການຜະລິດເປັນສິນຄ້າ ຕ້ອງໄດ້ຂໍອະນຸຍາດນຳໃຊ້ນ້ຳຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 30 ການນຳໃຊ້ນ້ຳໃນເຂດທີ່ດິນບໍລິເວນນ້ຳ**

ການນຳໃຊ້ນ້ຳໃນເຂດທີ່ດິນບໍລິເວນນ້ຳ ແມ່ນ ການນຳໃຊ້ແຫຼ່ງນ້ຳເຂົ້າໃນເປົ້າໝາຍໃດໜຶ່ງ ເປັນຕົ້ນ ສາທາລະນະປະໂຫຍດ, ຄອບຄົວ, ປະເພນີ, ທຸລະກິດ ໂດຍສອດຄ່ອງກັບກົດໝາຍ, ດຳລັດວ່າດ້ວຍທີ່ດິນບໍລິເວນນ້ຳ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ການນຳໃຊ້ນ້ຳໃນເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ**

ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບນ້ຳໃຕ້ດິນ ທີ່ມີຊັ້ນນ້ຳເຄັມ ແລະ ມີສານເຄມີອັນຕະລາຍເຈືອປົນທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ແມ່ນ ບໍ່ອະນຸຍາດໃຫ້ນຳໃຊ້ແຫຼ່ງນ້ຳໃຕ້ດິນຢູ່ເຂດດັ່ງກ່າວ ເຂົ້າໃນການບໍລິໂພກ, ອຸປະໂພກ, ປູກຝັງ, ລ້ຽງສັດ ເພື່ອປ້ອງກັນຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ.

ເຂດທີ່ມີຄວາມສ່ຽງຕໍ່ປະລິມານນ້ຳໃຕ້ດິນ ແມ່ນ ບໍ່ອະນຸຍາດໃຫ້ນຳໃຊ້ນ້ຳເຂົ້າໃນເປົ້າໝາຍການຜະລິດ ເຊັ່ນ ການຜະລິດກະສິກຳ, ອຸດສາຫະກຳ, ທຸລະກິດ, ການບໍລິການ.

**ມາດຕາ 32 ການນໍາໃຊ້ນໍ້າໃນເຂດທີ່ມີຄຸນຄ່າທາງດ້ານທໍາມະຊາດ, ປະຫວັດສາດ, ວັດທະນະທໍາ**

ການນໍາໃຊ້ນໍ້າໃນເຂດທີ່ມີຄຸນຄ່າທາງດ້ານທໍາມະຊາດ ແມ່ນ ການນໍາໃຊ້ນໍ້າເຂົ້າໃນກິດຈະກໍາການທ່ອງທ່ຽວທາງທໍາມະຊາດ, ການພັກຜ່ອນ, ການຫຼິ້ນກິດຈະກໍາທາງນໍ້າ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍການປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ການນໍາໃຊ້ນໍ້າໃນເຂດທີ່ມີຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະນະທໍາ ແມ່ນ ບໍ່ອະນຸຍາດໃຫ້ນໍາໃຊ້ນໍ້າເຂົ້າໃນເປົ້າໝາຍການຜະລິດ ແລະ ການບໍລິການ ເປັນຕົ້ນ ການຜະລິດກະສິກໍາ, ອຸດສາຫະກໍາ ແລະ ດໍາເນີນການປຸກສ້າງ ຢູ່ເຂດບໍລິເວນແຫຼ່ງນໍ້ານັ້ນ ເພື່ອປົກປັກຮັກສານໍ້າ ແລະ ຊັບພະຍາກອນນໍ້າ ແລະ ບູລະນະຮັກສາວັດຖຸບູຮານ, ບູຮານສະຖານ, ປູຊະນີຍະສະຖານ ໃຫ້ມີຄວາມຍືນຍົງ.

**ມາດຕາ 33 ການນໍາໃຊ້ນໍ້າໃນເຂດພື້ນທີ່ອະນຸລັກຊີວະນານາພັນທາງນໍ້າ ແລະ ເຂດບໍລິເວນແຄມນໍ້າ**

ການນໍາໃຊ້ນໍ້າໃນເຂດພື້ນທີ່ອະນຸລັກຊີວະນານາພັນທາງນໍ້າ ແມ່ນ ບໍ່ອະນຸຍາດໃຫ້ນໍາໃຊ້ນໍ້າເຂົ້າໃນກິດຈະກໍາໃດໜຶ່ງ ເພື່ອອະນຸລັກຊີວະນານາພັນທາງນໍ້າ, ບ່ອນຢູ່ອາໄສຂອງສັດ ແລະ ພືດພັນຈໍານວນຫຼາຍຊະນິດພັນ.

ການນໍາໃຊ້ນໍ້າໃນເຂດບໍລິເວນແຄມນໍ້າ ແມ່ນ ໃຫ້ນໍາໃຊ້ນໍ້ານັບຕັ້ງແຕ່ແຄມຕາຝັ່ງ ອອກໄປກາງແມ່ນໍ້າ ຊຶ່ງນໍາໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ແລະ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍການປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 34 ການນໍາໃຊ້ນໍ້າໃນເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ**

ການນໍາໃຊ້ນໍ້າ ຢູ່ເຂດທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ ແມ່ນ ບໍ່ອະນຸຍາດນໍາໃຊ້ນໍ້າເຂົ້າໃນກິດຈະກໍາໃດໜຶ່ງ ທີ່ສົ່ງຜົນກະທົບອັນບໍ່ດີຕໍ່ລະບົບນິເວດຢູ່ເຂດດັ່ງກ່າວ ເພື່ອຮັກສາລະບົບນິເວດ ແລະ ຊີວະນານາພັນ ເປັນຕົ້ນ ທິວທັດທໍາມະຊາດ, ສວນສາທາລະນະ, ປ່າໄມ້ທີ່ຍັງຫຼົງເຫຼືອຢູ່ ແລະ ພື້ນທີ່ຕົ້ນໄມ້, ແມ່ນໍ້າ, ຮ່ອງນໍ້າ, ໜອງ, ບຶງ, ພື້ນທີ່ກະສິກໍາ, ຊານເມືອງ, ພື້ນທີ່ນິເວດວິທະຍາ ທີ່ມີຫຼາຍຂະໜາດແຕກຕ່າງກັນ.

**ມາດຕາ 35 ການນໍາໃຊ້ນໍ້າໃນວັງສະຫງວນ**

ການນໍາໃຊ້ນໍ້າໃນວັງສະຫງວນ ແມ່ນ ບໍ່ອະນຸຍາດໃຫ້ມີການນໍາໃຊ້ນໍ້າ ເພື່ອຮັກສາລະບົບນິເວດ ເຊັ່ນ ສັດນໍ້າ, ຊີວະນານາພັນທາງນໍ້າ ແລະ ປ້ອງກັນການສູນພັນຂອງສາຍພັນປາ.

ໃນກໍລະນີຕ້ອງການນໍາໃຊ້ນໍ້າຢູ່ເຂດດັ່ງກ່າວ ແມ່ນ ໃຫ້ປະຕິບັດຕາມລະບຽບການສະເພາະຂອງເຂດນັ້ນ ແລະ ຕ້ອງຂໍອະນຸຍາດຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ໝວດທີ 7
## ສິດ ແລະ ພັນທະ
## ຂອງຜູ້ນໍາໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ

**ມາດຕາ 36 ສິດຂອງຜູ້ນໍາໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນໍາໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ມີສິດ ດັ່ງນີ້:

1. ນໍາໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃນຂອບເຂດເນື້ອທີ່ ແລະ ໄລຍະເວລາທີ່ໄດ້ຮັບອະນຸຍາດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບໝາກຜົນຈາກການນໍາໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;

3. ໄດ້ຮັບການປົກປ້ອງຜົນປະໂຫຍດຈາກການນຳໃຊ້, ປົກປັກຮັກສາ, ພັດທະນາ ແລະ ຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

4. ໄດ້ຮັບນະໂຍບາຍສົ່ງເສີມການຜະລິດ, ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ສືບທອດສັນຍາເຊົ່າ ຫຼື ສຳປະທານ ຕາມສັນຍາ ແລະ ກົດໝາຍ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 37 ພັນທະຂອງຜູ້ນຳໃຊ້ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຜູ້ທີ່ນຳໃຊ້ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ມີພັນທະ ດັ່ງນີ້:

1. ນຳໃຊ້ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

2. ປົກປັກຮັກສາ ແລະ ພັດທະນາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ບໍ່ສ້າງຄວາມເສຍຫາຍຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແລະ ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;

3. ບໍ່ໃຫ້ປ່ຽນແປງເຂດແດນ, ເພີ່ມ ຫຼື ຫຼຸດ ເນື້ອທີ່ດິນ, ການຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍອື່ນໂດຍບໍ່ໄດ້ຮັບອະນຸຍາດ;

4. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

5. ທົດແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ;

6. ເສຍຄ່າເຊົ່າ ຫຼື ສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະຕ່າງໆຢ່າງຄົບຖ້ວນ ແລະ ທັນກັບກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

7. ລາຍງານຕໍ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບສະພາບການນຳໃຊ້ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

8. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງລັດໃນການຄຸ້ມຄອງ ແລະ ກວດກາລາດຕະເວນ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບພະຍາກອນນ້ຳ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ອົງການປົກຄອງບ້ານ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ...7 ພຶດ 2024.....ເປັນຕົ້ນໄປ.

**ລັດຖະມົນຕີ**

ລັດຖະມົນຕີ

ນ.ບຸນຄຳ ວໍລະຈິດ